ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 1653/ທຄຕລ.2026
ນະຄອນຫຼວງວຽງຈັນ, ວັນທີ: 15 MAY 2026

# ໜັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດ ແລະ ວິສາຫະກິດ ຈັດຈຳໜ່າຍອຸປະກອນໄອທີ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາເຊົ່າຈັກອັດເອກະສານ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດ ແລະ ວິສາຫະກິດ ຈັດຈຳໜ່າຍອຸປະກອນໄອທີ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານ ຍື່ນຊອງປະມູນລາຄາເຊົ່າຈັກອັດເອກະສານ ຈຳນວນ 20 ເຄື່ອງ ນຳໃຊ້ຢູ່ ທຄຕລ ສຳນັກງານໃຫຍ່ ຕັ້ງຢູ່ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ດັ່ງລາຍລະອຽດລຸ່ມນີ້

## I. ລາຍການສະເປັກເຄື່ອງ

- ຈັກອັດເອກະສານ ທີ່ສາມາດຮອງຮັບການສັ່ງພິມຜ່ານທາງຄອມພິວເຕີໄດ້ທັງລະບົບ Windows ແລະ Ubuntu;
- ສາມາດສະແກນ/ພິມໄດ້ສອງໜ້າ;
- Copy/Scanner/Print Speed 45ppm | 55pm;
- First output: 3.1 secs, Warmup: 30 secs;
- Print Resolutions: 2400 dpi or equivalent x 600 dpi;
- Memory | Hard Disk: 4GB | 160GB;
- Paper Tray | Bypass Tray: 4 x 500 sheets | 1 x 95 sheets;
- Paper Size: A3-A6 and B4-B7;
- Printer/Scanner: Built-in PCL, Mono print, colors scan;
- Dimensions: W 640 x D 699 x H 1136mm (With Two Tray Module).

## II. ເງື່ອນໄຂການປະກອບເອກະສານການປະມູນ

### 1. ເອກະສານຊອງທີ 1 (ບໍ່ປິດຊອງ)

1) ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດ (ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ ປີ 2024/2025, ໃບຢັ້ງຢືນຕົວແທນຈັດຈຳໜ່າຍ);
2) ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນ, ໄລຍະຈັດສົ່ງ, ການອັບເດດ Software, ການຝຶກອົບຮົມການໃຊ້ງານໃຫ້ພະນັກງານ ທຄຕລ, ລະບຸປີຜະລິດ-ປະເທດຜະລິດສິນຄ້າ, ການບຳລຸງຮັກສາການບໍລິການຫຼັງການຂາຍ, ການຮັບປະກັນການເຄຼມຄືນ ໃນກໍລະນີບໍ່ສາມາດສະໜອງເຄື່ອງຈັກໃຫ້ຕາມຈຳນວນ ແລະ ເງື່ອນໄຂອື່ນໆຢ່າງລະອຽດຕາມ Format ຄັດຕິດມາພ້ອມນີ້;
3) ຄຸນວຸດທິຂອງບໍລິສັດ ແລະ ປະສົບການທີ່ເຮັດວຽກດັ່ງກ່າວ ຢ່າງໜ້ອຍ 2 ປີ ຫຼື ວຽກທີ່ຄ້າຍຄືລັກສະນະດຽວກັນ;



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

4) ກຳນົດຍື່ນຊອງມາດຕະຖານເຕັກນິກ ຈະປິດຮັບວັນທີ **19/06/2026** ເວລາ **15:30 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່.

**2. ເອກະສານຊອງທີ 2 (ປິດຊອງ)**

1) ບໍລິສັດຕ້ອງແຈ້ງລາຄາເປັນ 02 ທາງເລືອກ ໃຫ້ລະບຸເປັນສະກຸນເງິນກີບ ຄື: ລາຄາຕໍ່ເດືອນ, ລາຄາຕໍ່ 1 ປີ ແລະ ລາຄາຕໍ່ 2 ປີ ທີ່ລວມອາກອນມູນຄ່າເພີ່ມ ດັ່ງນີ້:

- ສະເໜີລາຄາທີ່ສາມາດນຳໃຊ້ແບບຈຳກັດມີເຕີ, ລາຄາເກີນຕໍ່ມີເຕີ (ລະບຸຈຳນວນເພດານມີເຕີທີ່ນຳໃຊ້);
- ສະເໜີລາຄາທີ່ນຳໃຊ້ແບບບໍ່ຈຳກັດມີເຕີ.

2) ໃນວັນທີ **23/06/2026** ເວລາ **13:00** ໂມງ ແມ່ນມື້ເປີດຊອງລາຄາປະມູນ ແຈ້ງໃຫ້ບໍລິສັດ ຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ ທຄຕລ ສຳນັກງານໃຫຍ່, ອາຄານຕຶກ C ຊັ້ນ 5 ຫ້ອງປະຊຸມ 5/2;

3) ຜູ້ເຂົ້າຮ່ວມຍື່ນຊອງປະມູນ ຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າຕ່ຳສຸດ ໃນໃບສະເໜີລາຄາທີ່ຍື່ນຕໍ່ 2 ປີ. ໂດຍໜັງສືຄ້ຳປະກັນທີ່ອອກໃຫ້ໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 30/09/2026) ຫຼື ແຊັກທີ່ວີຊາແລ້ວ (ທຄຕລ ບໍ່ຮັບເງິນສົດ) ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ;

4) ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ. ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

**III. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ຊະນະການປະມູນ**

1) ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາກັບ ທຄຕລ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ;

2) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ໄລຍະເວລາ 2 ປີ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນຄວາມຮັບຜິດຊອບຂອງຜູ້ຮັບເໝົາ;

3) ຕ້ອງມີພະນັກງານຊັບພອດແກ້ໄຂບັນຫາເຕັກນິກຂອງບໍລິສັດເອງ ພາຍໃນ 1-2 ຊົ່ວໂມງ ວັນຈັນ-ວັນສຸກ ເວລາ 8:00-17:00 ໂມງ;

4) ບໍລິສັດຕ້ອງຮັບຜິດຊອບນ້ຳມຶກ ແລະ ອາໄຫຼ່ຂອງເຄື່ອງຈັກ, ສ່ວນ ທຄຕລ ມີໜ້າທີ່ອຳນວຍຄວາມສະດວກສະຖານທີ່ຕັ້ງ, ເຈ້ຍ, ໄຟຟ້າ ແລະ ສາຍອິນເຕີເນັດ;

5) ການຊຳລະຄ່າບໍລິການແມ່ນເປັນລາຍເດືອນລວມອາກອນມູນຄ່າເພີ່ມ ດ້ວຍສະກຸນເງິນກີບ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້ດ້ວຍ.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ບາລິນ ສີລະວົງສິດ

**ຜູ້ປະສານງານ:**

ທ່ານ ພູວອນ ສີອິນໄຊ 020 5955 9889

ທ້າວ ຄຳຫຼ້າ ເພັດມີໄຊ 020 7777 7096

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

# ໃບສະເໜີ

## ຂໍເຂົ້າຮ່ວມປະມູນ....................................

- ອີງຕາມ ໜັງສືແຈ້ງປະມູນ ສະບັບເລກທີ ............./ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບຢັ້ງຢືນການຈັດຈຳໜ່າຍ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍສະໜອງອຸປະກອນໃຫ້ພາກສ່ວນໃດແດ່) | ຍີ່ຫໍ້ ແລະ ສະເປັກສິນຄ້າ | ປະເທດຜະລິດ | ບໍລິການຫຼັງການຂາຍ | ກຳນົດສົ່ງ ວ/ດ/ປ | |
| 1 | ບ/ສ......... | (xxx/ 02.01.2026) | (xxx/ 02.01.2026) | (xxx/ 02.01.2026) | .... ປີ | (ໃຫ້ລະບຸ) | | ພາຍໃນ ຫຼື ຕ່າງປະເທດ (ລະບຸປະເທດ) | ....ຊົ່ວໂມງ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ...........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ:

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ບໍລິສັດ.....................................
ບ້ານ..................................
ເມືອງ....................................................
ແຂວງ..................................................
ເບີໂທຕິດຕໍ່...........................................

ເລກທີ......................
ທີ່.............., ວັນທີ................................

# (ຮ່າງ) ໃບສະເໜີລາຄາ

| ຈຳນວນ | ແບບຈຳກັດມິເຕີ | | ແບບບໍ່ຈຳກັດມິເຕີ | ໝາຍເຫດ |
|---|---|---|---|---|
| | ມິເຕີທີ່ສາມາດ ນຳໃຊ້ໄດ້/ໜ່ວຍ/ເດືອນ | ລາຄາ (ກີບ) | ລາຄາ (ກີບ) | |
| 20 | | | | |
| **ມູນຄ່າລວມອາກອນຕໍ່ເດືອນ** | | | | |
| **ມູນຄ່າລວມອາກອນຕໍ່ 1 ປີ** | | | | |
| **ມູນຄ່າລວມອາກອນຕໍ່ 2 ປີ** | | | | |
| ຖ້າເກີນມິເຕີ (ບໍ່ລວມອາກອນ) | | | | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ...................................
ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: